**EDD** Employment Development Department
State of California

ຊື່ຜູ້ຮ້ອງຂໍເງິນ
ທີ່ຢູ່ໄປສະນີຂອງຜູ້ຮ້ອງຂໍເງິນ
ເມືອງ, ລັດ, ລະຫັດໄປສະນີຂອງຜູ້ຮ້ອງຂໍເງິນ

# ທ່ານໄດ້ຮັບເຊີນໃຫ້ລົງທະບຽນສຳລັບ UI ONLINE℠

ແຈ້ງການນີ້ແມ່ນເພື່ອເອົາເລກບັນຊີລູກຄ້າພະແນກພັດທະນາການຈ້າງງານ (EDD) ຂອງທ່ານໃຫ້ແກ່ທ່ານ ເພື່ອໃຫ້ທ່ານສາມາດລົງທະບຽນສຳລັບ UI Online℠ ໄດ້.

UI Online℠ ແມ່ນວິທີທີ່ໄວ, ສະດວກ ແລະ ປອດໄພ, ເພື່ອໃຫ້ທ່ານເຂົ້າເຖິງການຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານ (UI) ແລະ ຂໍ້ມູນການຈ່າຍເງິນລະອຽດຂອງທ່ານ ແລະ ຄຸ້ມຄອງການຮ້ອງຂໍເງິນ UI ຂອງທ່ານໄດຕະຫຼອດ 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ. ດຽວນີ້ທ່ານໄດ້ຍື່ນການຮ້ອງຂໍເງິນ UI ຂອງທ່ານແລ້ວ, ທ່ານຈຳເປັນຕ້ອງໃຫ້ຂໍ້ມູນການມີສິດໄດ້ຮັບເງິນຊ່ວຍເຫຼືອແກ່ພະແນກ EDD ເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອ. ຂະບວນການແບບທຸກໆສອງອາທິດນີ້ຍັງເອີ້ນວ່າການຢັ້ງຢືນການສືບຕໍ່ໄດ້ຮັບເງິນຊ່ວຍເຫຼືອ. ເພື່ອໃຫ້ເວລາປະມວນເງິນຊ່ວຍເຫຼືອໄວກວ່າ, ຈົ່ງໃຊ້ UI Online℠.*

ເພື່ອຄວາມສະດວກຫຼາຍຂຶ້ນ, UI Online Mobile℠ ຍັງສາມາດໃຊ້ໄດ້ໃນໂທລະສັບສະມາດໂຟນ ແລະ ແທັບເລັດນຳອີກ.

ເພື່ອລົງທະບຽນສຳລັບບັນຊີ UI Online℠, ໃຫ້ເຂົ້າເບິ່ງ **www.edd.ca.gov/UI_Online**. ທ່ານຈະຈຳເປັນຕ້ອງມີເລກປະກັນສັງຄົມ, ວັນເດືອນປີເກີດ, ທີ່ຢູ່ອີເມວສ່ວນຕົວ ແລະ ເລກບັນຊີລູກຄ້າ EDD ຂອງທ່ານຢູ່ຂ້າງລຸ່ມ. ພະແນກ EDD ດຳເນີນການຮັກສາຂໍ້ມູນລັບຢ່າງຈິງຈັງ. ກະລຸນາຢ່າເປີດເຜີຍເລກບັນຊີລູກຄ້າ EDD ຂອງທ່ານ.

**ເລກບັນຊີລູກຄ້າ EDD ຂອງທ່ານແມ່ນ:**

XXXXXX

**ໃຊ້ເລກບັນຊີລູກຄ້າ EDD ຂອງທ່ານເພື່ອລົງທະບຽນສຳລັບ UI Online℠ ໃນວັນນີ້.**

ຖ້າທ່ານມີບັນຊີ SDI Online ຈາກການຮ້ອງຂໍເງິນປະກັນຄວາມພິການ ຫຼື ການລາພັກທາງຄອບຄົວແບບໄດ້ຮັບຄ່າຈ້າງໃນເມື່ອກ່ອນ, ທ່ານຕ້ອງໃຊ້ຊື່ຜູ້ໃຊ້ ແລະ ລະຫັດຜ່ານດຽວກັນເພື່ອລົງທະບຽນສຳລັບ UI Online℠. ໃນເວລາລົງທະບຽນ, ໃຫ້ເລືອກປຸ່ມ "Register with SDI Login" ເພື່ອເຮັດໃຫ້ຂະບວນການລົງທະບຽນສຳລັບ UI Online℠ ໄວຂຶ້ນ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ UI Online℠, ໃຫ້ເບິ່ງໃບໂຄສະນາທີ່ຕິດຄັດມານີ້ ຫຼື ເບິ່ງໜຶ່ງໃນວິດີໂອແນະນຳ UI Online℠ ທີ່ເປັນປະໂຫຍດຂອງພວກເຮົາທີ່ **www.edd.ca.gov/UI_Online.**

## ຢ່າຊັກຊ້າ. ລົງທະບຽນໃນມື້ນີ້ ແລະ ນຳໃຊ້ຜົນປະໂຫຍດ ແລະ ຄວາມສະດວກຫຼາຍຢ່າງຂອງ UI Online℠.

* ລູກຄ້າໃນການຮ້ອງຂໍເງິນຊ່ວຍເຫຼືອບາງສ່ວນ ຫຼື ການແບ່ງປັນວຽກ ບໍ່ສາມາດຢັ້ງຢືນເງິນຊ່ວຍເຫຼືອ ຫຼື ເປີດຄືນການຮ້ອງຂໍເງິນຊ່ວຍເຫຼືອທີ່ມີຢູ່ແລ້ວໂດຍການໃຊ້ UI Online℠ ໄດ້ໃນເວລານີ້, ແຕ່ສາມາດເຂົ້າໃຊ້ທຸກຄຸນສົມບັດອື່ນຂອງລະບົບໄດ້.